ທ່ານປຣະສິທ

ຂອບໃຈທີ່ທ່ານຮູ້    ເຫັນຢູ່ຄືຄວາມຈິງ
ຫຼິງເຫັນສັຈຈະທັມ    ບໍ່ຫນ່ຳນີໃຫ້ຫນີຊ້ຳ
ອາດເປັນກັມຂອງຂ້າ    ຖືມາແຕ່ຊາຕກ່ອນ
ພົບບັນຫາແລ້ວໃຈອ່ອນ    ຢ້ານເກີດຜົນສະທ້ອນ
ສ່ວນລວມນັ້ນຈຶ່ງຫຼີກຫນີ    ທ່ານເອີຍ

ເປັນເຫດການດັ່ງນີ້    ມີແຕ່ຢູ່ເຫມືອນກໍແຂມ
ແນມເຫັນລົມພາຍຸ    ທະລຸມາກໍເລີຍເນີ້ງ
ຜູ້ຢູ່ເທິງຕີຕ້ານ    ລົມພານມາເພິ່ນຈັ້ງຢູ່
ຕົ້ນດູ່ຍູງໃຫຍ່ລົ້ມ    ຍ້ອນລົມຕ້ອງຈຶ່ງຕ່າວພັງ

ວັງນ້ຳໃຈທ່ານກໍໄດ້    ເອົາໃຈສົ່ງເປັນຄຳກອນ
ອອນຊອນໃຈຄວາມຫວານ    ອ່ານໄປໃຈຊຶ້ງ
ວ່າຄະນຶງເຖິງນ້ອງ    ຫມອງໃຈຍາມຊິຈາກ
ທຸກຄຳທ່ານຝາກໄວ້    ໃຈຂ້າແມ່ນບໍ່ລືມ    ແທ້ເນີ

ຈຳປາແດງ

ນາງຮູ້ສຶກປາບປື້ມ    ທ່ານຂຽນສົ່ງມາຫາ
ການຈາກລາຕ້ອງມີກັບ    ຖ້າພັບຕາຕ້ອງມືນໄດ້
ທ່ານມີຈິດໃຈຫມັ້ນ    ສາຍສັມພັນບໍ່ໃຫ້ຂາດ
ບໍ່ອາດຫຼົບຫຼີກລີ້    ຫນີຫນ້າຈຶ່ງຕ່າວມາ    ທ່ານເອີຍ

ຕາວັນ

ດວງຕາວັນນັ້ນເຂັ້ມກ້າ    ສົ່ງມາສູ່ໂລກາ

ວາຈາດີສີສະອອນ ກາບກອນກໍຊວນຍິ້ມ
ໃຜບໍ່ຊີມບໍ່ມີຮູ້ ຫວານໃນບໍ່ຮູ້ເມື່ອ
ຈິດໃຈນາງເອື້ອເຟື້ອ ຊຸມເຊື້ອຫມູ່ລາວ ແທ້ເນີ

## ຢາດນ້ຳທິພ

ຈິດໃຈຂາວເລີດລ້ຳ ດຳດ່າງບໍ່ມີຕິດ
ໃກ້ຊິດພິງພັນສາ ວາດກ່າວຈາກອນເຈົ້າ
ຍອດເມືອງລາວນາມກ້ອງ ປາກກາທອງຄອງຊີພ
ນ້ຳທິພຢາດຈາກຟ້າ ເພິ່ນຈາເວົ້າວ່າຫ່ວງນາງ ຂອບໃຈເດີ

## ມະໄລຮັກ

ບໍ່ເຄີຍຈາງຈືດຈ້ອຍ ຄອຍສິ່ງສົມພັນ
ເຫັນກັນພຽງໃນເວທີ ແຕ່ວ່າມີໃຈກ້ຽວ
ຜູ້ຈິດໃຈຫນຽວຫມັ້ນ ຄົນສຳຄັນແມ່ນລາວເກົ່າ
ສົ່ງຂ່າວຫານາດນ້ອງ ຕອນລາຫ້ອງຊິຫ່າງກັນ

ສາວທ່າແຂກຜູ່ນັ້ນ ນາງຈົມຢູ່ໃນຝັນ
ຮູ້ຈັກກັນບໍ່ເຄີຍເພີຍ ບໍ່ເອີ່ຍເລີຍຢາກຈາເວົ້າ
ເອົາແຕ່ຄຳກອນເຈົ້າ ສ່ວນເງິນນາງສົ່ງມາເຊື່ອງ
ຮູ້ເຣື່ອງເອື້ອຍຊິຈາກຂ້າງ ນາງນ້ອງຈຶ່ງຂ່າວມາ ຂອບໃຈເດີ

ບ່າວດອນໂຂງກໍບາກໜ້າ ມາຈາກຖິ່ນທາງໄກ
ເຂດໃຕ້ດິນແດນລາວ ໄດ້ຂ່າວຄາວເຖິງນ້ອງ
ສາວຫຼັກເຈັດ ຊິໄດ້ໄລລາຫ້ອງ ຄອງຫຼັງບໍ່ຫວັງຕ່າວ
ຈຳປາສັກ ຊູ້ບໍ່ທັນໄດ້ເວົ້າ ເພິ່ນເທງົາລີ້ຢູ່ໃນ ອ້າຍເອີຍ

ສຸທິດາເອື້ອຍກໍໄດ້ ຖາມຂ່າວສາວຫູກເຈັດ
ເຮັດໃຫ້ນາງໃຈຫຼົງ ໄຜ່ພະວົງຢາກໂງ່ໂຕ້ງ
ຈຶ່ງສົ່ງຕົວແທນນ້ອງ ຫົວໃຈໃສຈົນກ້າສ່ອງ
ວາຈາເປີດປ່ອງຢ້ຽມ ຈຽມເວົ້າກໍມ່ວນຫູ ແທ້ດາຍ

ສີພັນດອນຜູ່ຮູ້ ຝາກເຊົ້າສູ່ເວທີ
ທ່ານໂພສີ ໂມທະນາ ວ່າຈັ່ງໃດບໍເຈົ້າ?
ຈິດໃຈນາງກໍຫັນຫ້າວ ຢາກຂໍສາວສືບຕໍ່
ຄຸນຄວາມດີ ສາວຫູກເຈັດເພິ່ນກໍ່ໄວ້ ຊິໄລຂ້າງຫ່າງບໍ່ເປັນ ທ່ານເອີຍ

ໂດຍ: ສີພັນດອນ ດອກບົວກາງວັນ